# ໂຄງການຕັດສິນກຳນົດດ້ວຍຕົນເອງ

ພະແນກການບໍລິການດ້ານການພັດທະນາ ກຳລັງພັດທະນາໂຄງການໃໝ່ ຊື່ວ່າ ໂຄງການຕັດສິນກຳນົດດ້ວຍຕົນເອງ ທີ່ຈະເຮັດໃຫ້ຜູ້ເຂົ້າຮ່ວມມີການຄວບຄຸມຫຼາຍຂຶ້ນຕໍ່ກັບການເລືອກການບໍລິການ ແລະ ການສະໜັບສະໜູນຂອງເຂົາເຈົ້າ.




## ຊ່ວຍສ້າງທາງເລືອກທີ່ມີຜົນຕໍ່ກັບຊີວິດຂອງທ່ານ

1. ເຂົ້າຮ່ວມໃນການພັດທະນາແຜນໂຄງການສະເພາະບຸກຄົນ (IPP) ຜ່ານຂະບວນການວາງແຜນທີ່ເອົາຄົນເປັນໃຈກາງ.
2. ຮັບເອົາການຄວບຄຸມ ແລະ ຄວາມຮັບຜິດຊອບທີ່ຫຼາຍຂຶ້ນກ່ຽວກັບການບໍລິການ ແລະ ການສະໜັບສະໜູນທີ່ທ່ານຕ້ອງການເພື່ອບັນລຸໄດ້ເປົ້າໝາຍຂອງທ່ານ.
3. ທ່ານຈະຍັງມີຜູ້ປະສານງານການບໍລິການເພື່ອຊ່ວຍທ່ານ. ນອກນັ້ນ, ທ່ານອາດຈະເລືອກໃຊ້ຜູ້ອຳນວຍຄວາມສະດວກອິດສະຫຼະ (IF) ເພື່ອຊ່ວຍວາງແຜນ ແລະ ຮັບເອົາການບໍລິການ ແລະ ການສະໜັບສະໜູນຕ່າງໆ.




## ງົບປະມານສະເພາະບຸກຄົນຂອງທ່ານ

1. ທ່ານຈະໄດ້ຮັບງົບປະມານສະເພາະເພື່ອຊື້ການບໍລິການ ແລະ ການສະໜັບສະໜູນທີ່ທ່ານຕ້ອງການເພື່ອບັນລຸໄດ້ແຜນການຂອງທ່ານ.
2. ທ່ານຕ້ອງການໃຊ້ການບໍລິການຄຸ້ມຄອງການເງິນ (FMS) ທີ່ຈັດຫາໃຫ້ໂດຍ Alta California Regional Center (ACRC) ເພື່ອຈ່າຍຄ່າການບໍລິການຂອງທ່ານ.
3. ທ່ານຈະສາມາດເລືອກວ່າຜູ້ໃຫ້ບໍລິການ ຫຼື ບຸກຄົນໃດເປັນຜູ້ໃຫ້ການບໍລິການຂອງທ່ານ. ພວກເຂົາຈະຈຳເປັນຕ້ອງມີການກວດຂໍ້ມູນພື້ນຖານແຕ່ບໍ່ຈຳເປັນຕ້ອງເປັນຜູ້ຂາຍ.




ກຸມພາ 2016



# ຂັ້ນຕອນຂອງໂຄງການຕັດສິນກຳນົດດ້ວຍຕົນເອງ

## ວິທີເອົາຂໍ້ມູນ

- ຮຽນຮູ້ເພີ່ມເຕີມທີ່ www.altaregional.org ຫຼື www.dds.ca.gov
- ໂອ້ລົມກ່ຽວກັບການຕັດສິນກຳນົດດ້ວຍຕົນເອງຢູ່ກອງປະຊຸມ IPP ຂອງທ່ານ
- ຖາມຜູ້ປະສານງານການບໍລິການຂອງທ່ານເພື່ອເອົາຊື່ຂອງທ່ານໃສ່ໃນ "ລາຍຊື່ຜູ້ສົນໃຈ"

## ວິທີເຂົ້າໃນບັນຊີລາຍຊື່ "ທາງການ"

1. ເຂົ້າຮ່ວມ **ກອງປະຊຸມເຜີຍແຜ່ຂໍ້ມູນການຕັດສິນກຳນົດດ້ວຍເອງ** ພາກບັງຄັບ ທີ່ຈັດຂຶ້ນໂດຍສູນ Alta California Regional Center (ACRC) ເມື່ອມີກຳນົດເວລາຂອງພວກມັນ.
2. **ຫຼັງຈາກທີ່ທ່ານໄດ້ເຂົ້າຮ່ວມໃນກອງປະຊຸມເຜີຍແຜ່ຂໍ້ມູນແລ້ວ**, ຖ້າທ່ານຍັງຄິດວ່າ ການຕັດສິນກຳນົດດ້ວຍຕົນເອງແມ່ນທາງເລືອກທີ່ດີສຳລັບທ່ານ ຫຼື ຄົນໃນຄອບຄົວຂອງທ່ານ, ໃຫ້ບອກຜູ້ປະສານງານການບໍລິການຂອງທ່ານເອົາຊື່ຂອງທ່ານໃສ່ໃນ "**ບັນຊີລາຍຊື່ທາງການ**" ຂອງຜູ້ທີ່ສົນໃຈໃນການລົງທະບຽນເຂົ້າຮ່ວມໂຄງການຕັດສິນກຳນົດດ້ວຍຕົນເອງ.
3. ການຢູ່ໃນບັນຊີລາຍຊື່ ບໍ່ຮັບປະກັນວ່າທ່ານຈະຖືກເລືອກ ເປັນສ່ວນໜຶ່ງຂອງຜູ້ເຂົ້າຮ່ວມ 2,500 ຄົນທຳອິດໃນທົ່ວລັດ.

## ວິທີໄດ້ຮັບການເລືອກ

1. ACRC ຈະສົ່ງ "**ບັນຊີລາຍຊື່ທາງການ**" ຂອງບຸກຄົນທີ່ສົນໃຈໄປໃຫ້ DDS.
2. DDS ຈະເລືອກເອົາຜູ້ລົງທະບຽນ 2,500 ຄົນໃນທົ່ວລັດຈາກບັນດາຄົນເຫຼົ່ານັ້ນທີ່ເຂົ້າຮ່ວມ **ກອງປະຊຸມເຜີຍແຜ່ຂໍ້ມູນການຕັດສິນກຳນົດດ້ວຍຕົນເອງ.** ການເລືອກຈະພິຈາລະນາເຖິງຊົນເຜົ່າ, ອາຍຸ, ເພດ, ຄວາມພິການ ແລະ ການວິເຄາະເພື່ອຮັບປະກັນວ່າບຸກຄົນທີ່ໄດ້ຮັບເລືອກແມ່ນຕົວແທນໃຫ້ແກ່ປະຊາກອນຂອງສູນປະຈຳພາກໃນທົ່ວລັດ.
3. ຜູ້ທີ່ຖືກເລືອກຈະໄດ້ຮັບການຕິດຕໍ່ຈາກສູນ ACRC ເພື່ອຈັດທະບຽນເຂົ້າຮ່ວມການຝຶກອົບຮົມການຕັດສິນກຳນົດດ້ວຍຕົນເອງ ເພື່ອເລີ່ມການເຂົ້າຮ່ວມໂຄງການ.
4. ຫຼັງຈາກການດຳເນີນການສາມປີທຳອິດ, ທຸກຄົນທີ່ໄດ້ຮັບການບໍລິການຈາກສູນປະຈຳພາກພື້ນຈະມີທາງເລືອກເຂົ້າຮ່ວມໂຄງການຕັດສິນກຳນົດດ້ວຍເອງ.